**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# ບົດບັນທຶກຜົນກອງປະຊຸມສ້າງຕັ້ງສະມາຄົມ

ຄະນະຂັບຂວາຍສ້າງຕັ້ງສະມາຄົມເຂື່ອນລາວໄດ້ຈັດກອງປະຊຸມຂຶ້ນໃນວັນທີ 13/11/2020, ຢູ່ທີ່ ໂຮງແຮມແລນມາກ. ກອງປະຊຸມຄັ້ງນີ້ມີຜູ້ເຂົ້າຮ່ວມທັງໝົດ 120 ທ່ານ, ໃນນັ້ນມີຜູ້ສະໝັກເຂົ້າເປັນສະມາຊິກສະມາຄົມ ມີ 97 ຄົນ, ຍິງ 0 ຄົນ. ນອກນັ້ນ, ກອງປະຊຸມຍັງໄດ້ ເຊື້ອເຊີນ ທ່ານ ປອ ສີນາວາ ສຸພານຸວົງ ຮອງລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ໃນນາມຜູ້ກໍ່ຕັ້ງສາມາຄົມເຂື່ອນລາວເຂົ້າເປັນປະທານຮ່ວມ, ຜູ້ຕາງໜ້າຈາກບັນດາກົມກ່ຽວຂ້ອງໃນກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງພາຍໃນ, ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ພາກສ່ວນອື່ນໆ ເຂົ້າຮ່ວມນຳ (ໄດ້ຄັດຕິດລາຍຊື່ຜູ້ເຂົ້າຮ່ວມມາພ້ອມນີ້).

❖ **ກອງປະຊຸມ ໄດ້ຜ່ານເນື້ອໃນຕ່າງໆ ດັ່ງນີ້:**

1. ອ່ານຂໍ້ຕົກລົງວ່າດ້ວຍການອະນຸມັດຈັດກອງປະຊຸມເລືອກຕັ້ງຄະນະບໍລິຫານຂອງສະມາຄົມເຂື່ອນລາວ ສະບັບເລກທີ 1714/ພບ, ລົງວັນທີ 10/11/2020;
2. ຟັງການລາຍງານຂອງຄະນະຂັບຂວາຍສ້າງຕັ້ງສະມາຄົມ ກ່ຽວກັບຂະບວນການກະກຽມສ້າງຕັ້ງສະມາຄົມຜ່ານມາ;
3. ຜ່ານຮ່າງກົດລະບຽບຂອງສະມາຄົມ;
4. ເລືອກຕັ້ງຄະນະບໍລິຫານ, ຄະນະກວດກາ ແລະ ຜູ້ອຳນວຍການສະມາຄົມ.
5. ຜ່ານທິດທາງ, ແຜນການເຄື່ອນໄຫວ ຫຼື ແຜນດຳເນີນງານ ຂອງສະມາຄົມໃນຕໍ່ໜ້າ;
6. ຜ່ານມະຕິກອງປະຊຸມສ້າງຕັ້ງສະມາຄົມ

❖ **ກອງປະຊຸມໄດ້ຕົກລົງດັ່ງນີ້:**

1. ການຜ່ານຮ່າງກົດລະບຽບ

   ກອງປະຊຸມ ໄດ້ຄົ້ນຄວ້າ ແລະ ເຫັນດີເປັນເອກະພາບໃນດ້ານຫລັກການຕໍ່ຮ່າງກົດລະບຽບສະມາຄົມເຂື່ອນລາວ ແລະ ໄດ້ຕົກລົງມອບໃຫ້ຄະນະບໍລິຫານສະມາຄົມທີ່ຖືກເລືອກຕັ້ງໃນກອງປະຊຸມສ້າງຕັ້ງສະມາຄົມຄັ້ງນີ້ ຈັດຕັ້ງກັນຄົ້ນຄວ້າ ແລະ ທົບທວນໃຫ້ສຳເລັດສົມບູນໃນຂັ້ນຕໍ່ໄປ.

2. ການເລືອກຕັ້ງຄະນະບໍລິຫານ ແລະ ຄະນະກວດກາສະມາຄົມ

   ການເລືອກຕັ້ງແມ່ນໃຊ້ຮູບແບບປ່ອນບັດປິດລັບ, ເຊິ່ງຈຳນວນບັດທັງໝົດ: 97 ບັດ. ໃນນີ້ມີບັດເສຍ (ບັດຕາຍ): 1 ບັດ.

   ຜົນຂອງການເລືອກຕັ້ງມີຄືດັ່ງນີ້:

❖ ຄະນະບໍລິຫານສະມາຄົມປະກອບມີ:

| | | |
|---|---|---|
| 1) | ທ່ານ ທ່ານ ວິລະພົນ ວີຣະວົງສ໌ | ເປັນປະທານ; |
| 2) | ທ່ານ ປອ ແສງປະສິງ ພຣະກອນຄໍາ | ເປັນຮອງປະທານ; |
| 3) | ທ່ານ ປອ ຄໍາປະເສີດ ເທບວົງສາ | ເປັນຮອງປະທານ; |
| 4) | ທ່ານ ປອ ດູສິດ ພົມມະຈັນ | ເປັນກໍາມະການ; |
| 5) | ທ່ານ ປອ ຄໍາຮູ້ ຊາພູວົງ | ເປັນກໍາມະການ; |
| 6) | ທ່ານ ວີຣະພັນ ນັນດາວົງ | ເປັນກໍາມະການ; |
| 7) | ທ່ານ ວໍຣະເດດ ພອນແກ້ວ | ເປັນກໍາມະການ; |

8) ທ່ານ ເພັດສະໝອນ ຫຼວງອາໄພ ເປັນກຳມະການ.

❖ ຄະນະກວດກາສະມາຄົມປະກອບດ້ວຍ:

1) ທ່ານ ທັດສະດີ ສີສຸລາດ
2) ທ່ານ ຂັນທອນ ວໍຣະຈິດ
3) ທ່ານ ບຸນຍັງ ເພັງສຸວັນ

3. ຜົນການເລືອກຕັ້ງຜູ້ອໍານວຍການສະມາຄົມ:

ຄະນະບໍລິຫານສະມາຄົມທີ່ຖືກເລືອກຕັ້ງໃນກອງປະຊຸມທີ່ກ່າວຂ້າງເທິງໄດ້ ພ້ອມກັນຄົ້ນຄວ້າພິຈາລະນາຜູ້ທີ່ມີຄຸນສົມເໝາະສົມທີ່ຈະຮັບໜ້າທີ່ເປັນຜູ້ອໍານວຍການສະມາຄົມ ເພື່ອທີ່ຈະມອບໃຫ້ປະທານສະມາຄົມ ແຕ່ງຕັ້ງຢ່າງເປັນທາງການໃນຂັ້ນຕໍ່ໄປ ເຊິ່ງຄະນະດັ່ງກ່າວໄດ້ເປັນເອກະພາບກັນ ເລືອກເອົາ ທ່ານ ສີຈາດ ບຸດຊາກິຕິຣາດ ເປັນຜູ້ອໍານວຍການສະມາຄົມ.

4. ບັນຫາອື່ນໆ:

ກອງປະຊຸມສ້າງຕັ້ງສະມາຄົມເຂື່ອນລາວ ເຫັນດີເປັນເອກະພາບ ມອບໃຫ້ຄະນະບໍລິຫານສະມາຄົມ

1) ສືບຕໍ່ຄົ້ນຄວ້າ ແລະ ແຕ່ງຕັ້ງບຸກຄະລາກອນທີ່ມີຄຸນສົມບັດເໝາະສົມ ປະກອບເຂົ້າໃນຄະນະກໍາມະການເຕັກນິກ ແລະ ບັນດາກຸ່ມວິຊາການ ແລະ ຄົ້ນຄວ້າພາລະບົດບາດ ແລະ ອອກລະບຽບໃນການເຄື່ອນໄຫວຂອງຄະນະດັ່ງກ່າວ ໂດຍສອດຄ່ອງກັບກົດລະບຽບຂອງສະມາຄົມ ແລະ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.
2) ຄົ້ນຄວ້າແຕ່ງຕັ້ງທີ່ປຶກສາດ້ານເຕັກນິກຂອງສະມາຄົມ ໂດຍສອດຄ່ອງກັບລະບຽບຂອງສະມາຄົມ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.
3) ຄົ້ນຄວ້າກິ່ງຈັກ ແລະ ບຸກຄະລາກອນປະກອບໃສ່ຫ້ອງການບໍລິຫານຂອງສະມາຄົມຢ່າງເໝາະສົມ ໂດຍສອດຄ່ອງກັບລະບຽບຂອງສະມາຄົມເຂື່ອລາວ , ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.
4) ຄົ້ນຄວ້າກ່ຽວກັບກາໝາຍ(LOGO)ຂອງສະມາຄົມເຂື່ອນລາວ.
5) ຄົ້ນຄວ້າລະອຽດກ່ຽວກັບຄ່າທໍານຽມໃນການເປັນສະມາຊິກສາມັນຂອງສະມາຄົມເຂື່ອນລາວ ແລະ ປະກາດໃຊ້ຢ່າງເປັນທາງການໃນຂັ້ນຕໍ່ໄປ.

ທີ່ ໂຮງແຮມແລນມາກ, ວັນທີ 13/11/2020

**ປະທານກອງປະຊຸມ**